# ມະຕິ
# ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງແນວລາວສ້າງຊາດ

ນ້ອມນະມັດສະການພຣະເຖລານຸເຖລະ

ຮຽນ: - ທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ ທີ່ເຄົາລົບ ແລະນັບຖືຢ່າງສູງ,

- ຄະນະປະທານກອງປະຊຸມ ທີ່ນັບຖື,
- ບັນດາທ່ານຜູ້ແທນ, ແຂກກອງປະຊຸມ ທີ່ນັບຖື ແລະ ຮັກແພງທັງຫຼາຍ.

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງແນວລາວສ້າງຊາດ ໄດ້ດຳເນີນຢ່າງເປັນທາງການແຕ່ວັນທີ 25 ເຖິງ 26 ພະຈິກ 2021, ທີ່ນະຄອນຫຼວງວຽງຈັນ ໂດຍຜູ້ແທນ ແລະ ແຂກເຂົ້າຮ່ວມທັງໝົດ 592 ທ່ານ, ເພດຍິງ 147 ທ່ານ, ພຣະສົງ 16 ອົງ, ຜູ້ຕາງໜ້າສາສະໜາອື່ນອີກ 4 ທ່ານ. ໃນນີ້, ມີຜູ້ແທນສົມບູນທັງໝົດ 251 ທ່ານ, ເພດຍິງ 61 ທ່ານ, ພຣະສົງ 14 ອົງ ພ້ອມດ້ວຍແຂກຖືກເຊີນ 341 ທ່ານ, ເພດຍິງ 86 ທ່ານ, ພຣະສົງ 2 ອົງ ທີ່ເປັນຕົວແທນໃຫ້ແກ່ອົງການຈັດຕັ້ງພາຄີ, ປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ນັບທັງຄົນເຊື້ອຊາດລາວທີ່ດຳລົງຊີວິດຢູ່ຕ່າງປະເທດ.

ກອງປະຊຸມໃຫຍ່ຂອງແນວລາວສ້າງຊາດໃນຄັ້ງນີ້ ໄດ້ດຳເນີນພາຍໃຕ້ຄຳຂວັນ "**ເສີມຂະຫຍາຍມູນເຊື້ອອັນດີງາມຂອງແນວລາວສ້າງຊາດ, ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນຂອງປວງຊົນລາວທັງຊາດ, ເຕົ້າໂຮມກຳລັງແຮງຂອງປະຊາຊົນທຸກຊັ້ນຄົນ, ປະກອບສ່ວນຢ່າງແຂງແຮງເຂົ້າໃນພາລະກິດປົກປັກຮັກສາ-ສ້າງສາປະເທດຊາດ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ບັນລຸຜົນເປັນຈິງ**".

ກອງປະຊຸມໃຫຍ່ ໄດ້ດຳເນີນພາຍໃຕ້ບັນຍາກາດແຫ່ງຄວາມສາມັກຄີ, ຄວາມເປັນເອກະພາບ, ຄວາມຮັບຜິດຊອບການເມືອງສູງ, ຟົດຟື້ນ ແລະ ສ້າງສັນ ບວກກັບຄວາມສົນໃຈຂອງທົ່ວສັງຄົມ. ກອງປະຊຸມພ້ອມກັນຄົ້ນຄວ້າ, ຕົກລົງບັນຫາສຳຄັນຂອງວຽກງານແນວໂຮມ ດ້ວຍຄວາມເປັນເອກະພາບສູງ ແລະ ໄດ້ສິ້ນສຸດລົງດ້ວຍຜົນສຳເລັດອັນຈົບງາມ.

I. ກອງປະຊຸມ ໄດ້ຄົ້ນຄວ້າຢ່າງເລິກເຊິ່ງກົງໄປກົງມາ ແລະ ເປັນເອກະພາບຮັບຮອງເອົາລາຍງານການເມືອງຂອງຄະນະກຳມະການສູນກາງແນວລາວສ້າງຊາດ ສະໄໝທີ X ທີ່ຕີລາຄາໝາກຜົນແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ X ໃນໄລຍະ 5 ປີຜ່ານມາ ແລະ ໄດ້ຮັບຜົນສຳເລັດອັນໃຫຍ່ຫຼວງ ແລະ ຜົນງານພົ້ນເດັ່ນທີ່ຍາດມາໄດ້ຈຳນວນໜຶ່ງ, ພ້ອມນັ້ນ ຍັງໄດ້ເປັນເອກະພາບຢ່າງພາວະວິໄສຕໍ່ ດ້ານອ່ອນຂໍ້ຄົງຄ້າງ ໃນການນຳພາຊີ້ນຳຂອງແນວລາວສ້າງຊາດ ກໍຄືການຈັດຕັ້ງປະຕິບັດໜ້າທີ່ແຜນວຽກຈຸດສຸມບາງດ້ານທີ່ບໍ່ສາມາດບັນລຸຜົນຕາມຄາດໝາຍທີ່ວາງອອກ, ພ້ອມທັງຊີ້ໃຫ້ເຫັນສາເຫດຕົ້ນຕໍ ເພື່ອກຳນົດທິດທາງມາດຕະການແກ້ໄຂທີ່ສອດຄ່ອງ ແລະ ແທດເໝາະເພື່ອຮັບປະກັນການສືບຕໍ່ນຳພາຈັດຕັ້ງປະຕິບັດວຽກງານແນວໂຮມໃນຕໍ່ໜ້າ.

ບົນຈິດໃຈສ້າງການຫັນປ່ຽນໃໝ່, ກອງປະຊຸມໄດ້ຮັບຮອງເອົາ 4 ເນື້ອໃນການຫັນປ່ຽນໃໝ່ໃນວຽກງານແນວໂຮມດັ່ງນີ້:

(1) ກ່ອນອື່ນໝົດຕ້ອງສ້າງຄວາມຮັບຮູ້ຄວາມເຂົ້າໃຈ ຕໍ່ວຽກງານແນວໂຮມໃນໄລຍະໃໝ່ໃຫ້ເລິກເຊິ່ງ, ຊຶ່ງມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ມະຕິ 108 ຂອງກົມການເມືອງສູນກາງພັກ ໄດ້ກຳນົດໄວ້, ໃນນັ້ນໃຫ້ ກຳແໜ້ນ 4 ທັດສະນະພື້ນຖານ.

(2) ຍົກສູງຄຸນນະພາບການເຄື່ອນໄຫວຂອງແນວລາວສ້າງຊາດແຕ່ລະຂັ້ນ, ໂດຍເລັ່ງໃສ່ສ້າງການຫັນປ່ຽນ ແລະ ແກ້ໄຂຂອດທີ່ຍັງຫຍຸ້ງຍາກ, ຂໍ້ຄົງຄ້າງຕົ້ນຕໍໃນການປະຕິບັດມະຕິຂອງແນວລາວສ້າງຊາດຂັ້ນຂອງຕົນ ເປັນຕົ້ນ

ຄວາມຫຍຸ້ງຍາກດ້ານລາຍຮັບ ທີ່ອາໄສຈາກງົບປະມານຂອງລັດພຽງແຫຼ່ງດຽວ ມາສູ່ການສ້າງລາຍຮັບເພີ່ມເຕີມ ທີ່ບໍ່ຜິດກົດໝາຍໃຫ້ຫຼາຍຂຶ້ນ.

(3) ສ້າງການຫັນປ່ຽນດ້ານຮູບການ ແລະ ວິທີການປຸກລະດົມຂົນຂວາຍຊອນເຊື່ອປະຊາຊົນຊັ້ນຄົນຕ່າງໆ ເຂົ້າຮ່ວມຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ, ໂດຍສຸມໃສ່ຈັດຕັ້ງປະຕິບັດຄຳຮຽກຮ້ອງຂອງສູນກາງພັກ-ລັດຖະບານ ກໍຄືຄະນະພັກ-ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການຂອງຕົນ ໃຫ້ແທດກັບຕົວຈິງ ແລະ ນຳເອົາໝາກຜົນຂອງການແຂ່ງຂັນເຫຼົ່ານັ້ນ ມາໃຫ້ປະຊາຊົນບັນດາເຜົ່າ.

(4) ສ້າງການຫັນປ່ຽນດ້ານຮູບແບບການຮ່ວມສຳພັນ ລະຫວ່າງອົງການພາຄີດ້ວຍກັນ ໃນການເຄື່ອນໄຫວວຽກງານມະຫາຊົນໃຫ້ໄປຕາມທິດລວງດຽວກັນ, ຮ່ວມມືຊ່ວຍໜູນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ກັນ ແລະ ກັນ ເປັນຕົ້ນຢູ່ຂັ້ນຮາກຖານ.

ພ້ອມນັ້ນ, ກອງປະຊຸມໃຫຍ່ໄດ້ກຳນົດ ແລະ ຮັບຮອງເອົາ 6 ແຜນວຽກຈຸດສຸມ ເພື່ອຈັດຕັ້ງປະຕິບັດໃນ 5 ປີຕໍ່ໜ້າ 2021-2025.

II. ກອງປະຊຸມ ໄດ້ຮັບຟັງການລາຍງານ ແລະ ສະແດງຄວາມຍ້ອງຍໍຊົມເຊີຍ ທີ່ຄະນະກຳມະການສູນກາງແນວລາວສ້າງຊາດ ສະໄໝທີ X ໄດ້ນຳພາຈັດຕັ້ງປະຕິບັດແຜນພັດທະນາອົງການແນວລາວສ້າງຊາດ ໄດ້ຮັບຜົນສຳເລັດເປັນຢ່າງດີ, ພ້ອມທັງສະແດງຄວາມເຫັນດີເຫັນພ້ອມ ແລະ ສະໜັບສະໜູນແຜນພັດທະນາອົງການແນວລາວສ້າງຊາດ 5 ປີຕໍ່ໜ້າ(2021-2025), ເຊິ່ງເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງແນວລາວສ້າງຊາດອອກເປັນ **5 ແຜນງານ (ມີ 41 ໂຄງການ)** ເພື່ອສືບຕໍ່ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງຄື:

1. ແຜນງານ: ສ້າງຄວາມສາມັກຄີປອງດອງປະຊາຊົນບັນດາເຜົ່າ
2. ແຜນງານ: ເສີມສ້າງຄຸນນະທຳຂອງສາສະໜາ
3. ແຜນງານ: ຊຸກຍູ້ ແລະ ສົ່ງເສີມບົດບາດຂອງບັນດາຊັ້ນຄົນ ແລະ ການຈັດຕັ້ງສັງຄົມ
4. ແຜນງານ: ຮ່ວມມືກັບອົງການພາຄີ ແລະ ການຮ່ວມມືສາກົນ
5. ແຜນງານ: ສ້າງຄວາມເຂັ້ມແຂງໃຫ້ອົງການແນວລາວສ້າງຊາດແຕ່ລະຂັ້ນ.

III. ກອງປະຊຸມໃຫຍ່ໄດ້ຮັບຟັງລາຍງານກ່ຽວກັບການດັດແປງກົດລະບຽບຂອງແນວລາວສ້າງຊາດ ແລະ ໄດ້ຮັບຮອງເອົາກົດລະບຽບຂອງແນວລາວສ້າງຊາດ ສະໄໝທີ XI ເພື່ອໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດວຽກງານແນວໂຮມໃນໄລຍະໃໝ່.

ກົດລະບຽບຂອງແນວລາວສ້າງຊາດ ສະບັບປັບປຸງ ມີຜົນບັງຄັບໃຊ້ນັບແຕ່ມື້ກອງປະຊຸມໃຫຍ່ຮັບຮອງເອົາເປັນຕົ້ນໄປ; ຮຽກຮ້ອງໃຫ້ການຈັດຕັ້ງແນວລາວສ້າງຊາດທຸກຂັ້ນ ແລະ ກຳມະການແນວລາວສ້າງຊາດ ທຸກທ່ານ ຈົ່ງພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

IV. ກອງປະຊຸມໄດ້ຮັບຟັງການປະກອບຄຳເຫັນຂອງ 6 ພາກສ່ວນ ຈາກກະຊວງ, ອົງການຈັດຕັ້ງພາຄີຂັ້ນສູນກາງ, ຈາກແນວລາວສ້າງຊາດບາງແຂວງ ແລະ ຕົວແບບຈາກທ້ອງຖິ່ນຈຳນວນໜຶ່ງ ທີ່ມີຊີວິດຊີວາ, ເຊິ່ງເປັນການຢັ້ງຢືນເຖິງໝາກຜົນການເຄື່ອນໄຫວວຽກງານຂອງແນວລາວສ້າງຊາດໃນໄລຍະຜ່ານມາ ແລະ ເປັນບົດຮຽນທີ່ດີຕໍ່ສັງຄົມ.

V. ກອງປະຊຸມໃຫຍ່ ໄດ້ຮັບຮອງເອົາບົດສຳຫຼວດການນຳພາລວມ ຂອງຄະນະກຳມະການສູນກາງແນວລາວສ້າງຊາດສະໄໝທີ X, ເຊິ່ງໄດ້ຕີລາຄາສູງຕໍ່ຄວາມພະຍາຍາມ ແລະ ຄວາມເປັນເຈົ້າການປະດິດສ້າງ ໃນການເສີມຂະຫຍາຍມູນເຊື້ອອັນດີງາມຂອງແນວລາວອິດສະຫຼະ, ແນວລາວຮັກຊາດ ແລະ ແນວລາວສ້າງຊາດ ອັນມີຄະນະປະຈຳສູນກາງແນວລາວສ້າງຊາດ ເປັນຜູ້ນຳພາຊີ້ນຳ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງແນວລາວສ້າງຊາດ ເຊິ່ງໄດ້ຮັບຜົນສຳເລັດທີ່ສຳຄັນຫຼາຍດ້ານ. ພ້ອມນັ້ນ ກໍໄດ້ສະແດງຄວາມຊົມເຊີຍຕໍ່ຄະນະປະຈຳ ທີ່ມີຄວາມສາມັກຄີເປັນເອກະພາບໜັກແໜ້ນ, ເຂັ້ມແຂງ, ເປັນຫຼັກແຫຼ່ງແຫ່ງການເຕົ້າໂຮມຄວາມສາມັກຄີປອງດອງທົ່ວປວງຊົນລາວທັງຊາດ. ກອງປະຊຸມໄດ້ເລັ່ງທວງໃຫ້ຄະນະກຳມະການສູນກາງແນວລາວສ້າງຊາດ ສະໄໝທີ XI ອອກແຮງເສີມ

ຂະຫຍາຍຈຸດດີໃນດ້ານຕ່າງໆ, ພ້ອມທັງວາງມາດຕະການແກ້ໄຂຈຸດອ່ອນຂໍ້ຄົງຄ້າງທີ່ຜ່ານມາຢ່າງຕັ້ງໜ້າ, ຍົກສູງຄວາມສາມາດນໍາພາ ແລະ ຄວາມເປັນແບບຢ່າງນໍາໜ້າ ຂອງຄະນະກໍາມະການສູນກາງແນວລາວສ້າງຊາດ ໃຫ້ສູງຂຶ້ນຕື່ມອີກ, ເປັນຫຼັກແຫຼ່ງໃນການເຕົ້າໂຮມຄວາມສາມັກຄີປອງດອງ ແລະ ສ້າງການຫັນປ່ຽນໃນວຽກງານແນວໂຮມຢ່າງແຂງແຮງ.

VI. ກອງປະຊຸມໃຫຍ່ ໄດ້ຮັບຮອງເອົາການສະເໜີແຕ່ງຕັ້ງກໍາມະການສູນກາງແນວລາວສ້າງຊາດ ສະໄໝທີ XI ຈໍານວນ 238 ທ່ານ, ໃນນີ້ ເພດຍິງ 51 ທ່ານ, ພຣະສົງ 16 ອົງ ເພື່ອເປັນແກ່ນສານເຕົ້າໂຮມຄວາມສາມັກຄີປອງດອງທົ່ວປວງຊົນລາວທັງຊາດ.

ກອງປະຊຸມຄົບຄະນະຄັ້ງປະຖົມມະລຶກຂອງຄະນະກໍາມະການສູນກາງແນວລາວສ້າງຊາດສະໄໝທີ XI ໄດ້ເປັນເອກະສັນຢ່າງສົມບູນຮັບຮອງເອົາການສະເຫນີແຕ່ງຕັ້ງເອົາຄະນະປະຈໍາສູນກາງແນວລາວສ້າງຊາດ ສະໄໝທີ XI ຈໍານວນ 9 ທ່ານ, ຍິງ 1 ທ່ານ ຄື: (1). ທ່ານ ປອ ສິນລະວົງ ຄູດໄພທູນ; (2). ທ່ານ ຄໍາເພີຍ ບຸດດາວຽງ; (3). ທ່ານ ຈັນທະວົງ ແສນອາມາດມົນຕີ; (4). ທ່ານ ເຢ່ຍເກີຢາ ໝໍຈໍຈີງຕືວ; (5). ທ່ານ ນາງ ສີພະຈັນ ນັນທະວົງສາ; (6). ທ່ານ ດຣ. ຈັນເພັງ ສຸດທິວົງ; (7). ທ່ານ ຄະນອງລິດ ສີສົມບູນ; (8). ທ່ານ ຄໍາຢາດ ຮາຊດາວົງ; (9). ທ່ານ ໄທລໍ ຫວາເຊັ້ງ;

ກອງປະຊຸມໄດ້ຮັບຮອງເອົາການແຕ່ງຕັ້ງປະທານ ແລະ ຮອງປະທານສູນກາງແນວລາວສ້າງຊາດ ປະຈໍາການຈໍານວນ 5 ທ່ານ, ຍິງ 1 ທ່ານ ຄື : (1) ທ່ານ ປອ ສິນລະວົງ ຄູດໄພທູນ, ກໍາມະການກົມການເມືອງສູນກາງພັກ ເປັນປະທານ, (2) ທ່ານ ຄໍາເພີຍ ບຸດດາວຽງ, ກໍາມະການສູນກາງພັກ ເປັນຮອງປະທານ, (3) ທ່ານ ຈັນທະວົງ ແສນອາມາດມົນຕີ ເປັນຮອງປະທານ, (4) ທ່ານ ເຢ່ຍເກີຢາ ໝໍຈໍຈີງຕືວ ເປັນຮອງປະທານ, (5) ທ່ານ ນາງ ສີພະຈັນ ນັນທະວົງສາ ເປັນຮອງປະທານ, (6) ທ່ານ ດຣ. ຈັນເພັງ ສຸດທິວົງ ເປັນຮອງປະທານ.

ກອງປະຊຸມໄດ້ຮັບຮອງເອົາຮອງປະທານບໍ່ປະຈໍາການ ຈໍານວນ 4 ທ່ານ, ຍິງ 2 ທ່ານຄື: (1) ທ່ານ ນາງ ແສງເດືອນ ຫຼ້າຈັນທະບູນ, (2) ທ່ານ ຫຽມ ພົມມະຈັນ, (3) ທ່ານ ນາງ ຄໍາຈັນ ພົມແສງສະຫວັນ, (4) ທ່ານ ສຈ. ປອ ອອດ ພົງສະຫວັນ.

ກອງປະຊຸມໄດ້ຮັບຮອງເອົາທ່ານ ນາງ ສີພະຈັນ ນັນທະວົງສາ ຮອງປະທານສູນກາງແນວລາວສ້າງຊາດ ເປັນປະທານກວດກາສູນກາງແນວລາວສ້າງຊາດ.

VII. ກອງປະຊຸມໃຫຍ່ ຮູ້ບຸນຄຸນ ແລະ ຂອບໃຈຢ່າງສູງ ຕໍ່ທ່ານ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ, ທ່ານ ນາງ ປານີ ຢາທໍ່ຕູ້ ກໍາມະການກົມການເມືອງສູນກາງພັກ, ຮອງປະທານປະເທດແຫ່ງ ສປປ ລາວ ແລະ ທ່ານ ນາງ ສີໃສ ລືເດດມູນສອນ ກໍາມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ທີ່ໄດ້ໃຫ້ກຽດເຂົ້າຮ່ວມເປັນຄະນະປະທານກອງປະຊຸມ, ພິເສດຂໍຈົດຈໍາບຸນຄຸນຕໍ່ ທ່ານ ເລຂາທິການໃຫຍ່-ປະທານປະເທດ ທີ່ໄດ້ໃຫ້ກຽດໂອ້ລົມຊີ້ທິດເບື້ອງທາງຕໍ່ກອງປະຊຸມໃຫຍ່, ພະນະທ່ານໄດ້ຮຽກຮ້ອງໃຫ້ອົງການແນວລາວສ້າງຊາດຕ້ອງເອົາໃຈໃສ່ປັບປຸງບາງດ້ານສໍາຄັນເປັນຕົ້ນ:

**ໜຶ່ງ,** ພວກເຮົາຕ້ອງໄດ້ໃຫ້ຄວາມສໍາຄັນຕໍ່ການສືບຕໍ່ຕັ້ງໜ້າເສີມຂະຫຍາຍບົດບາດຂອງແນວລາວສ້າງຊາດໃນການເຕົ້າໂຮມຄວາມເປັນປຶກແຜ່ນຂອງຊາດ, ເຊີດຊູສະຕິເປັນເຈົ້າ ແລະ ຄວາມຮັບຜິດຊອບ ຂອງຄົນລາວ ຕໍ່ຊາຕາກໍາຂອງປະເທດຊາດ. ກ່ອນອື່ນໝົດຕ້ອງສ້າງຄວາມຮັບຮູ້ເຂົ້າໃຈຕໍ່ວຽກງານແນວໂຮມ ແລະ ວຽກງານມະຫາຊົນຂອງພັກ ໃນໄລຍະໃໝ່ ໃຫ້ເລິກເຊິ່ງ ແລະ ກໍາໄດ້ທັດສະນະພື້ນຖານທີ່ວ່າ: “ພາລະກິດປະຕິວັດ ຍາມໃດກໍແມ່ນພາລະກິດຂອງມະຫາຊົນ ແລະ ຕ້ອງຖືມະຫາຊົນເປັນກົກ ແລະ ເປັນຈຸດເລີ່ມ, ວຽກງານມະຫາຊົນຂອງພັກ ແມ່ນວຽກງານສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີເປັນປຶກແຜ່ນ ແລະ ແມ່ນການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ”.

**ສອງ,** ສືບຕໍ່ຍົກລະດັບຄວາມສາມາດຂອງຄະນະກໍາມະການແນວລາວສ້າງຊາດຕໍ່ວຽກງານແນວໂຮມເປັນຕົ້ນໃນການນໍາພາສຶກສາອົບຮົມ ແລະ ຍົກລະດັບຄວາມຕື່ນຕົວທາງການເມືອງ, ການເຂົ້າຮ່ວມຄຸ້ມຄອງລັດ, ຄຸ້ມ

ຄອງສັງຄົມ, ການປະຕິບັດກົນໄກທາງການເມືອງ-ສັງຄົມ ຂອງລະບອບປະຊາທິປະໄຕປະຊາຊົນ ໃຫ້ເຂັ້ມແຂງ, ຮັບປະກັນສິດເປັນເຈົ້າຂອງປະຊາຊົນ, ຄວາມເປັນປະຊາທິປະໄຕ ແລະ ຍຸຕິທຳ ໃນສັງຄົມ ບົນພື້ນຖານທຸກໆ ແນວທາງນະໂຍບາຍຂອງພັກ ລະບຽບກົດໝາຍຂອງລັດ ຕ້ອງໃຫ້ "ປະຊາຊົນຮູ້, ປະຊາຊົນປຶກສາຫາລື, ປະຊາຊົນ ເຂົ້າຮ່ວມປະຕິບັດ, ປະຊາຊົນກວດກາ ແລະ ປະຊາຊົນໄດ້ຮັບຜົນປະໂຫຍດ".

**ສາມ,** ຕ້ອງຍົກສູງບົດບາດຕິດຕາມ, ກວດກາ ຂອງແນວລາວສ້າງຊາດ ໃຫ້ແຂງແຮງ ໂດຍຜ່ານຄຳເຫັນ-ຄຳ ສະເໜີ ຂອງປະຊາຊົນບັນດາເຜົ່າຕໍ່ການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຂອງພັກໃນແຕ່ລະໄລຍະ, ທັງຕິດຕາມ, ກວດກາ ການເຄື່ອນໄຫວຂອງອົງການອຳນາດລັດຂອງສູນກາງ ແລະ ທ້ອງຖິ່ນ, ເບິ່ງແຍ່ງດູແລ ແລະ ຕິດຕາມ, ກວດກາ ການປະຕິບັດໜ້າທີ່ຂອງຜູ້ທີ່ປະຊາຊົນເລືອກມາໃຫ້ເປັນຜູ້ຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ.

**ສີ່,** ແນວລາວສ້າງຊາດແຕ່ລະຂັ້ນ ສືບຕໍ່ປັບປຸງແຜນການເຄື່ອນໄຫວເຮັດວຽກຂອງຕົນໃຫ້ຄ່ອງຕົວ ແລະ ສາມາດຮັບປະກັນປະສິດທິຜົນຂອງການປະຕິບັດໜ້າທີ່ການເມືອງ ເປັນຕົ້ນ: ກົນໄກການເຄື່ອນໄຫວເຮັດວຽກ ລະຫວ່າງ ຄະນະກຳມະການສູນກາງແນວລາວສ້າງຊາດ ກັບແນວລາວສ້າງຊາດ ຂັ້ນທ້ອງຖິ່ນ; ກົນໄກການເຄື່ອນໄຫວ ລະຫວ່າງ ແນວລາວສ້າງຊາດ ກັບບັນດາອົງການພາຄີ(ສະຫະພັນນັກຮົບເກົ່າ, ຊາວໜຸ່ມ, ແມ່ຍິງ ແລະ ກຳມະບານ); ກົນໄກການເຄື່ອນໄຫວ ລະຫວ່າງສູນກາງແນວລາວສ້າງຊາດ ກັບ 4 ອົງການທີ່ເຮັດວຽກງານຊົນເຜົ່າ ແລະ ສາສະໜາ ເປັນຕົ້ນ ສະພາແຫ່ງຊາດ(ກຳມາທິການບັນດາເຜົ່າ), ກັບລັດຖະບານ(ກະຊວງພາຍໃນ) ແລະ ກັບອົງການເສນາທິການ ສູນກາງພັກ(ສະຖາບັນຄົ້ນຄວ້າເສດຖະກິດ-ສັງຄົມແຫ່ງຊາດ).

**ຫ້າ,** ຄະນະກຳມະການສູນກາງແນວລາວສ້າງຊາດ ຊຸດໃໝ່ ທີ່ໄດ້ຮັບຮອງເອົານີ້ ເພີ່ມທະວີຄວາມສາມັກຄີ ພາຍໃນ ແລະ ເຮັດວຽກຮ່ວມມືສາກົນ ແລະ ເປີດກວ້າງສາຍພົວພັນການທູດປະຊາຊົນຕາມແນວທາງການ ຕ່າງປະເທດຂອງພັກ-ລັດເຮົາ, ຮັດແໜ້ນສາຍພົວພັນມິດຕະພາບ ແລະ ການຮ່ວມມືກັບອົງການແນວໂຮມ ແລະ ອົງ ການຈັດຕັ້ງປະຊາຊົນ ຂອງປະເທດເພື່ອນມິດ, ປະເທດເພື່ອນບ້ານໃກ້ຄຽງ, ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງການ ສະໜັບສະໜູນຊ່ວຍເຫຼືອ, ປະກອບສ່ວນເຂົ້າໃນໂຄງການພັດທະນາເສດຖະກິດ-ສັງຄົມຢູ່ປະເທດເຮົາ; ສືບຕໍ່ປັບປຸງ ຮູບການເຄື່ອນໄຫວການທູດພາກປະຊາຊົນໃຫ້ເຂົ້າສູ່ລວງເລິກເປັນຕົ້ນແມ່ນ ການນຳມູນເຊື້ອທີ່ເປັນເອກະລັກຂອງ ຊາດ, ຜະລິດຕະພັນດ້ານວັດທະນະທຳ, ອາຫານການກິນ ແລະ ສິນຄ້າອື່ນໆ ໄປສູ່ສາກົນໃຫ້ກວ້າງຂວາງ ແລະ ມີ ຊີວິດຊີວາ ເພື່ອດຶງດູດການລົງທຶນ, ການຢ້ຽມຢາມ, ທ່ອງທ່ຽວມາສູ່ປະເທດຊາດໃຫ້ຫຼາຍຂຶ້ນ.

**ຫົກ,** ສືບຕໍ່ສ້າງເງື່ອນໄຂ ແລະ ຊຸກຍູ້ສົ່ງອຳນວຍຄວາມສະດວກຕ່າງໆ ໃຫ້ພີ່ນ້ອງເຊື້ອສາຍລາວທີ່ຢູ່ ຕ່າງປະເທດ ທີ່ຍັງຮັກເຊື້ອແພງຊາດ ໄດ້ອວ່າຍໜ້າມາຫາປະເທດຊາດ ທີ່ເປັນບ້ານເກີດເມືອງນອນຂອງຕົນນັ້ນ, ເພື່ອ ຮ່ວມກັນສ້າງສາພັດທະນາປະເທດ ເທົ່າທີ່ມີເງື່ອນໄຂ ແລະ ຄວາມສາມາດຂອງຕົນ ເພື່ອຮ່ວມກັບປະຊາຊົນພາຍໃນ ປະເທດ ສ້າງສາພັດທະນາຊາດບ້ານເມືອງ ໃຫ້ຈະເລີນຮຸ່ງເຮືອງສືບຕໍ່ໄປ.

**VIII.** ກອງປະຊຸມໃຫຍ່ໄດ້ຮຽກຮ້ອງມາຍັງບັນດາທ່ານກຳມະການແນວລາວສ້າງຊາດ ຂັ້ນຕ່າງໆ ຈົ່ງເຊີດຊູ ຄວາມເປັນແບບຢ່າງນຳໜ້າໃນທຸກດ້ານ ນຳພາມະຫາຊົນປະຕິບັດມະຕິກອງປະຊຸມໃຫຍ່ສະບັບນີ້ໃຫ້ປາກົດຜົນເປັນ ຈິງ. ພ້ອມກັນນີ້ ຮຽກຮ້ອງມາຍັງພະນັກງານ, ນັກຮົບ, ປະຊາຊົນລາວບັນດາເຜົ່າ, ບັນດາຊັ້ນຄົນ, ສາສະໜາ, ເພດ, ໄວ ລວມທັງຄົນຕ່າງດ້າວທີ່ດຳລົງຊີວິດຢູ່ ສປປ ລາວ ແລະ ພີ່ນ້ອງເຊື້ອຊາດລາວຜູ້ຮັກຊາດ ທີ່ພວມດຳລົງຊີວິດ ແລະ ທຳມາຫາກິນຢູ່ຕ່າງປະເທດ ຈົ່ງເຊີດຊູນ້ຳໃຈຮັກຊາດ, ເສີມຂະຫຍາຍມູນເຊື້ອດຸໝັ່ນຂະຫຍັນພຽນ, ມານະຈິດບຸກບືນ ໃນການປະຕິບັດໜ້າທີ່ ເພື່ອເປັນການປະກອບສ່ວນໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ ກ້າວເຂົ້າສູ່ສັງຄົມທີ່ປະຊາຊົນເປັນເຈົ້າ, ມີປະຊາທິປະໄຕ, ສະເໝີພາບ ແລະ ຍຸຕິທຳ.

ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງແນວລາວສ້າງຊາດ ໄດ້ຖືກຮັບຮອງເອົາຢ່າງເປັນ ເອກະພາບ ໃນເວລາ 09 ໂມງ 45 ນາທີ ຂອງວັນທີ 26 ພະຈິກ 2021.

**ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງແນວລາວສ້າງຊາດ**